ຄຸນປະໂຫຍດ ແລະ ເຕັກນິກການຂະຫຍາຍພັນແມງກະບີ້ເຂົ້າສານ

ໂດຍ: ຄອນປານີ ດຸນຜາດີ, ສູນຄົ້ນຄວ້າການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

ໂດຍ: ບຸນເພັງ ສີຫອມຈັນຫອມຈັນສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ

ແມງກະບີ້ເຂົ້າສານ ມີຊື່ວິທະຍາສາດ ວ່າ Corcyracephalonica (Stainton) ຢູ່ໃນອັນດັບຂອງ Lepidoptera ໃນຕະກຸນ Galleriidae ເປັນແມງໄມ້ ທີ່ນຳໃຊ້ໃນການຜະລິດແຕນບຽນໄຂ່ໄດ້, ສາມາດລ້ຽງເພີ່ມໄດ້ງ່າຍ,ຂັ້ນຕອນໃນການລ້ຽງບໍ່ຫຍຸ້ງຍາກ ແລະ ຕົ້ນທຶນກໍ່ຕ່ຳ.

ລັກສະນະທົ່ວໄປ ແລະ ວົງຈອນຊີວິດ

ແມງກະບີ້ເຂົ້າສານ ເປັນແມງກະບີ້ຂະໜາດກາງ ມີສີນ້ຳຕານອ່ອນ, ຂະໜາດບ່ອນກາງປີກແທກໄດ້ 20-25 ມມ. ລຳ ໂຕຍາວປະມານ 12-15 ມມ. ໄລຍະການຈະເລີນເຕີບໂຕມີ 4 ໄລຍະ ຄື: ໄລະຍະໄຂ່ທີ່ມີສີຂາວຄຼີມເຫຼືອມ ອາຍຸ 4-5 ວັນ,ໄລຍະໜອນມີສີຂາວອົມເທົ່າ ມີຂາທຽມເຫັນໄດ້ຊັດເຈນລອກຄາບພາຍໃນ 5-7 ວັນ (ມີອາຍຸ 28-41 ວັນ) ໄລຍະດັກແດ້ ເປັນສີນ້ຳຕານຜິວໜາ ແລະ ແຂງ ຕາມແນວເສັ້ນກາງຂອງດັກແດ້ ມີປຸ່ມສີນ້ຳຕານແດງອາ

ໃສ່ຢູ່ໃນໄຍສີຂາວ ມີເສດເຂົ້າສານ ແລະ ຮໍາຕິດຢູ່ໂດຍຮອບ ເປັນກ້ອນແຂງ ອາຍຸ6-13 ວັນ ສ່ວນໄລຍະໂຕແກ່ເຕັມໄວ ລໍາໂຕຈະມີເກັດ ໂຕຜູ້ນ້ອຍກວ່າໂຕແມ່ ເຫັນໄດ້ຢ່າງຊັດເຈນ ທາງໜ້າຂອງປີກຄູ່ຫຼັງສຸດ ມີສີນໍ້ຕານອ່ອນ ປົນສີເທົາສະເໝີກັນ ໂດຍຜິວປີກຂອງປີກຄູ່ຫຼັງຂອງໂຕຜູ້ຈະເຂັ້ມກວ່າ. ໂຕຜູ້ອາຍຸ 3-7 ວັນ ໂຕແມ່ 3-12 ວັນ.

ວິທີການລ້ຽງ

ໃຊ້ຮໍາອ່ອນທີ່ລະອຽດດີ 100 ກຼາມ ໃສ່ໃນກັບຢາງ ຂະໜາດ 10 x 10 x 10 ຊຕມ3 ອົບຮໍາດ້ວຍສານຟອດສ໌ຟິນ ນານ7 ວັນ ເພື່ອກໍາຈັດແມງໄມ້ຊະນິດອື່ນ ທີ່ມາກັບຮໍາ ເຂ່ຍໂຕອ່ອນຂອງແມງກະບີ້ເຂົ້າສານທີ່ມີອາຍຸ 10 ວັນ ໃສ່ໃນກັບທີ່ບັນຈຸອາຫານໄວ້ແລ້ວ 100 ໂຕ/ກັບ ຈາກນັ້ນ ນໍາໄປລ້ຽງໃນຫ້ອງຄວບຄຸມອຸນຫະພູມ 2<25>2 ອົງສາ, ຄວາມຊຸ່ມ 5<75>5%.ຄວາມສໍາຄັນຂອງແມງກະບີ້ເຂົ້ າສານ ແມງກະບີ້ເຂົ້ າສານ ສາມາດວາງໄຂ່ໄດ້ ໃນປະລິມານຫຼາຍ, ຂະຫຍາຍພັນໄດ້ໄວ, ເປັນແມງໄມ້ສັດຕູພືດ ໃນສາງເກັບມ້ຽນເຂົ້າສານ, ເຂົ້າເປືອກ, ສາລີ, ເຂົ້າຝ້າງ, ຖົ່ວເຫຼືອງ,ຖົ່ວດິນ, ເຂົ້າປຽນ, ໝາກໄມ້ແຫ້ງ, ເຂົ້າໜົມປັງ ແລະ ຂີ້ໝາກພ້າວແຫ້ງ ເຫຼົ່ານີ້ເປັນຕົ້ນ. ສ່ວນຫຼາຍ ມັກ ຈະລ້ຽງແມງກະບີ້ເຂົ້ ານສານ ເພື່ອເອົາໄຂ່ຂອງມັນ ສາມາດເພີ່ມປະລິມານໄຂ່ໄດ້ ໄວ.ສະນັ້ນ ມັນຈຶ່ງມີຄຸນປະໂຫຍດ ເຊັ່ນ: ໃຊ້ເຂົ້າໃນການຜະລິດແຕນບຽນໄຂ່ Trichogramma spp. ສາມາດຂະຫຍາຍພັນດ້ ວຍໄຂ່ຂອງແມງກະບີ້ ເຂົ້ານສານ ແລະ ແມງກະບີ້ເຂົ້ານເປືອກ. ແມງກະບີ້ເຂົ້ານສານ ເໝາະສໍາລັບການລ້ຽງແຕນບຽນໄຂ່ທີ່ສຸດ ເນື່ອງຈາກວ່ າ ເປັນແມງໄມ້ທີ່ສາມາດຜະລິດໄດ້ໄວ້ ເປັນຈໍານວນ ຫຼາຍ ໂດຍໃຊ້ຕົ້ນທຶນໃນການຜະລິດຕ ່ໍ, ຂັ້ນຕອນໃນການລ້ ຽງບໍ່ ສັບສົນ, ເພີ່ມປະລິມານໄດ້ງ່ າຍ.ນອກນັ້ນຍັງໃຊ້ປະໂຫຍດໃນການລ້ ຽງແມງໄມ້ເປັນປະໂຫຍດ ໄດ້ຫຼາຍຊະນິດ ເຊັ່ນ: ແມງຈິ່ ງໂຈ້ ປີກໃສ (ແມງຊ້ ານ້ ປີກໃສ) ແມງຫາງ ໜີ ບ ເປັນຕົ້ນ.